ໂຮມເລື່ອງສັ້ນ

# ແວ່ນຕາພໍ່



ໂດຍ: ເລີດ ໄຊຊະນະ

ໂຮມເລື່ອງສັ້ນ

# ແອ່ບຕາພໍ່

ໂດຍ: ເລີດ ໄຊຊະນະ

ຈັດພິມໂດຍ:
**ວັນນະສິນ**
2007

ໂຮມເລື່ອງສັ້ນ " ແວ່ນຕາພໍ່ "

ໂດຍ: **ເລີດ ໄຊຊະນະ**

©ສະຫງວນລິຂະສິດ

*ບັນນາທິການ:*

ໂອທອງ ຄຳອິນຊູ

*ພິສູດອັກສອນ*

ສິນສະຫວັນ ເຄື່ອງເທພາລິດ

ຂີວໄຊ ແສງສຸກ

*ອອກແບບປົກ:*

ທອງເດືອນ ທຳມະວົງ

*ແຕ້ມຮູບປະກອບ:*

ບຸດສະບາ ແພງດວງ

*ຈັດໜ້າ-ຄອມພິວເຕີ:*

ທອງເດືອນ ທຳມະວົງ

ໄພວັນ ທຸມມາວົງ

*ຈັດຈຳໜ່າຍ:*

ວາລະສານ ວັນນະສິນ

ພິມຄັ້ງທີ I ຈຳນວນ 1.000 ຫົວ

ຂະໜາດ 13X19 ຊມ

ທະບຽນພິມ: 336ພຈ/290052007

ພິມທີ່ ໂຮງພິມແຫ່ງລັດ, ນະຄອນຫລວງວຽງຈັນ, ສ.ປ.ປ.ລາວ

# ຄຳນຳ

"ແວ່ນຕາພໍ່"ເປັນຜົນງານໂຮມເລື່ອງສັ້ນຂອງ ເລີດ ໄຊຊະນະ ຜູ້ເຄີຍຈັບປາກກາຂຽນຂ່າວ ກ້າວເຂົ້າສູ່ການຂຽນເລື່ອງສັ້ນ ດັ່ງນັ້ນ ບົດເລື່ອງສັ້ນຂອງເຂົາ ຈຶ່ງສ່ອງແສງເຖິງຊີວິດຈິງໃນສັງຄົມ ທີ່ເຂົາໄດ້ພານພົບ ແລ້ວຍິບຍົກເອົາມານຳສະເຫນີ.

ຂໍ້ມູນເກັບກຳມາເພື່ອຂຽນຂ່າວ ບາງເລື່ອງລາວຖືກປຸງແຕ່ງໃຫ້ກາຍເປັນບົດເລື່ອງສັ້ນ ລົງພິມໃນຫນ້າວາລະສານ ຫນັງສືພິມ ເມື່ອໂອກາດເຫມາະສົມ ເລີດ ໄຊຊະນະ ກໍ່ຢາກຈະມີປື້ມໂຮມເລື່ອງສັ້ນເປັນຂອງຕົນເອງ ຈຶ່ງໄດ້ທ້ອນໂຮມເອົາເລື່ອງເຫລົ່ານັ້ນມາຂູດເກົາອີກເທື່ອຫນຶ່ງ ນີ້ຄືທີ່ມາຂອງໂຮມເລື່ອງສັ້ນ "ແວ່ນຕາພໍ່"

ວາລະສານ ວັນນະສິນ ຈັດພິມປຶ້ມເຫລັ້ມນີ້ ດ້ວຍການອຸປະຖຳຂອງບໍລິສັດເບຍລາວ ໃນໂອກາດນີ້ ຈຶ່ງຂໍສະແດງຄວາມຂອບໃຈນຳບໍລິສັດເບຍລາວເປັນຢ່າງສູງ ຂໍສະແດງຄວາມ ຊົມເຊີຍຕໍ່ທຸກໆທ່ານ ທີ່ມີສ່ວນເຮັດໃຫ້ປຶ້ມເຫລັ້ມນີ້ ໄດ້ພິມອອກສູ່ສາຍຕາຜູ້ອ່ານ ຂໍຂອບໃຈລ່ວງຫນ້າ ຕໍ່ທຸກໆທ່ານ ທີ່ມີສ່ວນເຮັດໃຫ້ການຈັດພິມໃນຄັ້ງຕໍ່ໄປມີຄວາມສົມບູນແບບກວ່າເກົ່າ.

**ໂອທອງ ຄຳອິນຊູ**



# ຈາກໃຈຜູ້ແຕ່ງ

ຫຼາຍປີ ທີ່ຢຶດອາຊີບນັກຫນັງສືພິມ.

ຂ້າພະເຈົ້າໄດ້ມີໂອກາດສຳຜັດກັບຜູ້ຄົນຫລາກຫລາຍສາຂາວິຊາຊີບໃນສັງຄົມອັນກວ້າງໃຫຍ່ໄພສານ ທຸກບັນຫາທີ່ພົບເຫັນໃນເວລາລາຂ່າວ ຂ້າພະເຈົ້າຈະນຳມາຄິດຫງຳ ຫລື ຂຽນສ່ອງແສງໃນຄໍລຳຕ່າງໆ ຕາມຫນ້າຫນັງສືພິມລາຍວັນໃນນາມປາກກາທີ່ແຕກຕ່າງກັນ.

ຕະຫຼອດເວລາທີ່ເປັນນັກຂຽນປະຈຳຄໍລຳ ຂໍ້ມູນສ່ວນໃຫຍ່ແມ່ນເຫດການຕົວຈິງ ທີ່ເກີດຂຶ້ນໃນສັງຄົມ ມີບາງບັນຫາມັນກິນໃຈ ແລະ ເປັນພາບສະຖິດຮ່ວງນຶກຕະຫລອດ ຈຶ່ງພະຍາຍາມຖອດມາຂຽນເປັນເລື່ອງຂຶ້ນມາກໍ່ແນ່ໃຈວ່າ ມັນເປັນເລື່ອງສັ້ນ ຫຼື ບົດບັນທຶກເຫດການ.

“ແວ່ນຕາພໍ່” ຖືວ່າເປັນໂຮມເລື່ອງທົວທຳອິດຂອງຂ້າພະເຈົ້າ. ຄິດວ່າ ຄວາມຜິດພາດຍັງມີຫລາຍ ເພາະເລື່ອງທີ່ຂຽນຂຶ້ນກໍ່ບໍ່ຮູ້ວ່າມັນເຫມາະສົມກັບເລື່ອງສັ້ນຫລືບໍ່? ຂໍໃຫ້ເພື່ອນຜູ້ອ່ານຊ່ວຍຕັດສິນໃຫ້ດ້ວຍ.

ບຸນກຸສົນອັນໃດຈະເກີດຂຶ້ນຈາກປຶ້ມຫົວນີ້ ຂໍມອບໃຫ້(ແມ່ມີ ແກ້ວສຸວັນ) ຜູ້ໃຫ້ກຳເນີດ. ເຖິງແມ່ຈະບໍ່ຮູ້ໜັງສື ແຕ່ແມ່ກໍ່ມີຫົວໃຈອັນບໍລິສຸດ ແລະ ອ່ອນໂຍນ ເຊິ່ງໃນຫົວໃຈດວງນັ້ນ ປ່ຽມລົ້ນໄປດ້ວຍຄວາມຮັກອັນບໍລິສຸດຕໍ່ລູກ ທີ່ບໍ່ມີວັນເສື່ອມຄາຍ. ຫົວໃຈດວງນັ້ນ ສາມາດຢັ່ງຮູ້ໄດ້ໝົດທຸກສິ່ງຢ່າງທີ່ລູກປາດຖະໜາ. ແມ່ສົ່ງເສີມໃຫ້ລູກໄດ້ສຶກສາຮ່ຳຮຽນຈົນເຖິງທີ່ສຸດຄວາມສາມາດຂອງແຕ່ລະຄົນ. ຂໍມອບແດ່ດວງວິນຍານຂອງພໍ່ກ້ຽວ ຜູ້ຈາກໄປ ແຕ່ອາຍຸຂ້າພະເຈົ້າໄດ້ພຽງ 6 ເດືອນ ແລະ ດວງວິນຍານຂອງລຸງຈານແກະ ( ສຳລິດ ແກ້ວສຸວັນ) ຜູ້ປູກຈິດສຳນຶກໃຫ້ຮັກການອ່ານ ຈົນມີແວວການຂຽນແຕ່ຄາວຮຽນຊັ້ນປະຖົມ. ເຊິ່ງເພິ່ນບໍ່ມີໂອກາດໄດ້ອ່ານຜົນງານນີ້ ແສນເສຍດາຍທີ່ເພິ່ນຈາກໄປ...

ດ້ວຍຄວາມເຄົາລົບ

ວຽງຈັນ, ວັນທີ 30/5/ 2007

**ຄຳວິສັນ ແກ້ວສຸວັນ**

ເຈົ້າຂອງນາມປາກກາ (ເລັດໄຊຊະນະ, ທິດດີ, ແນວລາວ)

# ສາລະບານ

ຄຳນຳ
ຈາກໃຈຜູ້ແຕ່ງ
1. ແວ່ນຕາພໍ່ 2
2. ຫລິງ.....ສິດ 6
3. ອ້າຍ...ນ້ອງ...ເພື່ອນ... 12
4. ຢາກບອກຮັກ 19
5. ເຂົາສະຫລາດບໍ່? 27
6. ຫິວອີກທ່າວລາ...ລໍ້ 31
7. ຫມໍຫຍຸມປາກເຂັດ 36
8. ຜູ້ຊ່ວຍ 41
9. ຫນ້າທີ່ຂອງແມ່ 46
10. ນ້ຳເມົາກັບຊີວິດ 51



# ແວ່ນຕາພໍ່

ກິນ້ອຍງຶມໆ ຫາວໆ ຄືກັນກັບຊອກຫາສິ່ງທີ່ມີຄ່າກະດັກກະດໍ້, ຈຶ່ງວ່າ ໂສ້ງເສື້ອທີ່ແມ່ມ້ຽນໃນຕູ້ຊະຊາຍ ຢັງຢາຍອອກມາຫມົດ.

ຜູ້ເປັນແມ່ ຍັງຄຶງກົ້ມຫນ້າກົ້ມຕາຫຍິບຫມາກກະດຸມເສື້ອຫນ່ວຍໃຫມ່ໃສ່ເສື້ອຂາວໃຫ້ກິນ້ອຍໄປໂຮງຮຽນມື້ອື່ນເຊົ້າ. ສ່ວນແມວບັກຄຳ ພັດນອນເສີຍມົ່ງເຮັດຫນວດຕີງຍຸບຍິບ ຢ່າງມີຄວາມສຸກ ພາຍຫລັງທີ່ມໍ່າເຂົ້າກັບຫົວປາອີ່ມແລ້ວ. ກິນ້ອຍພະຍາຍາມຄົ້ນອີກ ຜູດຂຶ້ນຜູດລົງເລີຍບັງເອີນຫົວໄປຕຳໃສ່ຝາເຮືອນດັງຕູບບາດຫນຶ່ງ.

ແມ່ທັງສັ່ນທັງເຊັນຟ້າວຮ້ອງຖາມລູກວ່າ:

- ໂອຍ ! ຕາຍແລ້ວ. ລູກເປັນຫຍັງບໍ່?. ເປັນນັກຮຽນຫ້ອງ ປ. 2 ແລ້ວຍັງຂີ້ດີ້ບໍ່ມີລະບຽບ!

- ລູກຊອກ ແວ່ນຕາພໍ່.

- ແວ່ນຕາໂຕໃດອີກ! ເວົ້າສຸດຄວາມ ແມ່ກໍຄວ້າກອດລູກເຂົ້າແນບເອິກ ແລ້ວກໍແຫງນເບິ່ງຫລັງຕູ້ບ່ອນທີ່ຜົວເຄີຍວາງແວ່ນຕາໄວ້.

ກີນ້ອຍ ເວົ້າອວດແມ່ຕື່ມອີກວ່າ:

- ຊຸມອາວ, ຊຸມອາ ແລະ ຊຸມນ້າສາວໃຜໆ ກໍເວົ້າວ່າ ລູກຄືກັນກັບພໍ່ ຄັນໃສ່ແວ່ນຕາແຮ່ງໂຕຕອນພໍ່ໂລດ.

ແມ່ມິດຢູ່ຄາວໜຶ່ງ ແລ້ວຕອບວ່າ:

- ພໍ່ເອົາແວ່ນຕາໄປແລ້ວ.

ກີນ້ອຍ ຊີງລີງຢູ່ບຶດໜຶ່ງຄືໃຊ້ຄວາມຄິດ ແລ້ວເອີ່ຍຂຶ້ນວ່າ:

- ຮວ້າຍ! ກະດຽວວ່າພໍ່ໄປອາເມລິກາບໍ່ທັນມາແມ່?

- ມື້ຄືນນີ້ ພໍ່ເຈົ້າກັບມາ ເລີຍຖືແວ່ນຕາໄປນໍາເພາະຢ້ານລູກເຮັດແຕກ.

- ເປັນຫຍັງແມ່ບໍ່ປຸກເຮົາຕື່ນຊັ້ນນະ! ຄັນຊັ້ນເຂົາໜີມເຮົາເດ? ພໍ່ເມືອແລ້ວຫວະແມ່?

- ອື! ພໍ່ເມືອແລ້ວ ລູກໄປຮຽນໜັງສືກ່ອນ ມື້ອື່ນຈະເລົ່າບິດຮຽນບໍ່ໄດ້, ສາວຄູຊິຮ້າຍ

- ກະໄດ້ ແຕ່ແມ່ຕ້ອງສັນຍາວ່າ ຕ້ອງຊຽນ ຈ.ມ. ໃຫ້

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ